# ແຜນງານປັບປຸງຄຸນນະພາບ ແລະ ຂະຫຍາຍ
# ໂອກາດເຂົ້າຮຽນ
# ສຳລັບການສຶກສາຂັ້ນພື້ນຖານ ຢູ່ ສ ປປ ລາວ (BEQUAL)

**ເອກະສານອອກແບບການລົງທຶນ**

**ສະບັບຮ່າງ**

**ເດືອນພະຈິກ 2013**

**ບົດສະຫຼຸບສັງລວມຂອງ ການອອກແບບໂຄງການການເຂົ້າເຖິງຄຸນນະພາບການສຶກສາຂັ້ນພື້ນຖານຢູ່ໃນ ສປປ ລາວ (BEQUAL)**

ການສະໜັບສະໜູນຂອງປະເທດອົດສະຕຣາລີ ຕໍ່ວຽກງານການສຶກສາຂັ້ນພື້ນຖານ ຢູ່ ສປປ ລາວ ໄດ້ມີຄວາມສໍາຄັນໃນແຜນງານການພັດທະນາ ເປັນເວລາຫຼາຍກວ່າ 15 ປີມາແລ້ວ. ພາຍໃຕ້ຍຸດທະສາດການຮ່ວມມືເພື່ອການພັດທະນາລະຫວ່າງ ສປປ ລາວ ກັບປະເທດອົດສະຕຣາລີ (ໄລຍະປີ 2009-- 2015) ແລະ ດັ່ງທີ່ໄດ້ລະບຸໄວ້ໃນແຜນງານການຊ່ວຍເຫຼືອຂອງລັດຖະບານປະເທດອົດສະຕຣາລີ ປີ 2013--2018, ຂະແໜງສຶກສາ ແມ່ນຂະແໜງການໜຶ່ງທີ່ສໍາຄັນທີ່ສຸດ ທີ່ລັດຖະບານອົດສະຕຣາລີ ໃຫ້ຄໍາໝັ້ນສັນຍາທີ່ຈະສືບຕໍ່ ໃຫ້ການສະໜັບສະໜູນ ສປປ ລາວ ພາຍໃຕ້ແຜນຍຸດທະສາດໄລຍະສິບປີ. ແຜນຍຸດທະສາດນີ້ ແມ່ນ ແນ່ໃສ່ຮັບປະກັນວ່າເດັກຍິງ ແລະ ເດັກຊາຍໝົດທຸກຄົນ (ໂດຍສະເພາະແມ່ນເດັກດ້ອຍໂອກາດ) ໄດ້ຮັບການສຶກສາຂັ້ນພື້ນຖານທີ່ມີຄຸນນະພາບ, ສາມາດອ່ານອອກຂຽນໄດ້, ການນັບເລກພື້ນຖານ ແລະທັກສະຊີວິດ.

ການສະໜັບສະໜູນຂອງລັດຖະບານອົດສະຕຣາລີ ຕໍ່ຂະແໜງການສຶກສາຂັ້ນພື້ນຖານ ຢູ່ ສປປ ລາວ ໃນໄລຍະບໍ່ດົນມານີ້ ໄດ້ຮັບການຈັດຕັ້ງປະຕິບັດຜ່ານແຜນງານ ທີ່ມີຫລາຍອົງການຊ່ວຍເຫລືອ ສໍາລັບການສຶກສາເພື່ອໝົດທຸກຄົນ – ໂຄງການກອງທຶນເລັ່ງລັດ, ແຕ່ວ່າ ໂຄງການດັ່ງກ່າວນີ້ ຈະສິ້ນສຸດລົງໃນປີ 2014 ໃນມໍ່ນີ້, ແຕ່ເຖິງຢ່າງໃດກໍ່ຕາມ ກໍ່ຈະມີກອງທຶນການສຶກສາກົບເພື່ອແຜນງານກາສຶກສາທີ່ຈະສຸມໃສ່ການສະໜອງເງິນອຸດໜູນໂຮງຮຽນ ແລະ ການຝຶກອົບຮົມການບໍລິຫານໂຮງຮຽນຂັ້ນພື້ນຖານ.

ລັດຖະບານ ສປປ ລາວ ໄດ້ຢືນຢັນຄວາມຮຽກຮ້ອງຕ້ອງການຂອງຕົນ ເພື່ອສະເໜີໃຫ້ລັດຖະບານປະເທດ ອົດສະຕຣາລີ ສືບຕໍ່ວຽກງານຢ່າງໃກ້ຊິດຕິດແທດ ກັບກະຊວງສຶກສາທິການ ແລະກິລາ ໂດຍຜ່ານແຜນງານໃໝ່ ທີ່ມີຊື່ວ່າ ແຜນງານປັບປຸງຄຸນນະພາບ ແລະ ຂະຫຍາຍໂອກາດເຂົ້າເຖິງການສຶກສາຂັ້ນພື້ນຖານ ໃນ ສປປ ລາວ (BEQUAL). ແຜນງານດັ່ງກ່າວນີ້ ຈະເນັ້ນໜັກໃສ່ຂະການປັບປຸງຄຸນນະພາບຂອງການສຶກສາ, ໂດຍຜ່ານການເສີມສ້າງນະໂຍບາຍ,ການວາງແຜນ ແລະ ການປະສານງານການສຶກສາ. ການເພີ່ມການມີສ່ວນຮ່ວມ ແລະ ການເຂົ້າເຖິງ,ການສະໜັບສະໜູນວຽກງານການກໍ່ສ້າງຄູ; ການສະໜອງອຸປະກອນການຮຽນ ແລະ ການສອນ ແລະ ການກໍ່ສ້າງໂຄ່ງລ່າງພື້ນຖານ. ລັດຖະບານອົດສະຕຣາລີຈະສະໜອງງົບປະມານເຖິງ $86 ລ້ານໂດລາອົດສະຕະາລີ ຕະຫຼອດໄລຍະ 4 ປີ ທໍາອິດ (2014-2018) ຂອງແຜນງານ. ເຊິ່ງປັດຈຸບັນນີ້ລັດຖະບານອົດສະຕາລີກໍາລັງຢູ່ໃນຂັ້ນຕອນສົນທະນາກັບຫ້ອງການສະຫະພາບເອີຣົບປະຈໍາລາວ (EU) ເພື່ອຊອກຫາວິທີການຮ່ວມມືທີ່ເປັນໄປໄດ້, ຖ້າຫາກຕົກລົງກັນໄດ້, ອາດຈະສະໜອງທຶນເພີ້ມເຕີມທີ່ໄດ້ຈາກທຶນ EU ໃນແຜນງານໄລຍະທໍາອິດ.

ແຜນງານ BEQUAL ຈະເຮັດວຽກໃນ 65 ເມືອງເປົ້າໝາຍທີ່ທຸກຍາກຢູ່ລາວ (ເບິ່ງພາບທີ 1 ແຜນທີ່ເມືອງເປົ້າໝາຍ), ແຜນງານດັ່ງກ່າວນີ້ຈະສືບຕໍ່ພັດທະນາຈາກຜົນເລັດການເຮັດວຽກຈາກ 56 ເມືອງເປົ້າໝາຍຂອງແຜນງານກກອງທຶນເລັ່ງລັດ ແລະ ເພີ້ມຂະຫຍາຍໄປອີກ 9 ເມືອງທີ່ມີບັນຫາທາງດ້ານອັດຕາລອດເຫຼືອຮອດຊັ້ນປໍ 5 ຕໍ່າສຸດ.

ທິດສະດີກ່ຽວກັບການປ່ຽນແປງໄດ້ນໍາໃຊ້ເຂົ້າໃນການຢືນຢັນຍຸດທະສາດດ້ານຄວາມຊ່ວຍເຫຼືອຂະແໜງສຶກສາ ປີ 2013-2018 ຂອງລັດຖະບານປະເທດອົດສະຕຣາລີ

ຊຶ່ງມີຄວາມມຸ້ງຫວັງໃນການພັດທະນາດ້ານຊັບພະຍາກອນ ໃນໄລຍະຍາວ ຢ່າງໜ້ອຍ 10 ປີ. ແຜນງານດັ່ງກ່າວນີ້ ຈະເນັ້ນໜັກໃສ່ການຈັດຕັ້ງປະຕິບັດພັດທະນາການສຶກສາຂັ້ນພື້ນຖານ ເປັນ 3 ໄລຍະ ຄືດັ່ງລຸ່ມນີ້:

| **ໄລຍະ** ກະກຽມແຜນງານ | **ໄລຍະ** 1 | **ໄລຍະ** 2 | **ໄລຍະ** 3 |
|---|---|---|---|
| 2014 | 2014/15 – 2017/18 | 2018/19 – 2021/22 | 2022/23 – 2023/24 |
| 6-8 ເດືອນ | 4 ປີ | 4 ປີ | 2 ປີ |
| ກິດຈະກຳເບື້ອງຕົ້ນ | ກິດຈະກຳແນະນຳ, ຈັດຕັ້ງປະຕິບັດໂຄງການ ແລະ ຕິດຕາມຊຸກຍູ້ | ຕິດຕາມຊຸກຍູ້, ຜັນຂະຫຍາຍ ແລະນຳໃຊ້ບົດຮຽນໃຫ້ກວ້າງຂວາງ | ສະຫຼຸບສັງລວມ |

ເບິ່ງພາບທີ 1 ແຜນທີ່ເມືອງເປົ້າໝາຍ




ການຄັດເລືອກເມືອງ 65 ເມືອງເປົ້າໝາຍ BEQUAL
ແມ່ນອີງຕາມຕົວເລກສະຖິຕິທີ່ຢູ່ລຸ່ມຕົວເລກສະເລ່ຍແຫ່ງຊາດທີ່ພົວພັນເຖິງ:
ອັດຕາການເຂົ້າຮຽນສຸດທິຂອງເດັກຍິງ, ອັດຕາການລອດເຫຼືອຂອງເດັກຍິງ ຮອດ ຊັ້ນ ປ 5 ແລະ
ອັດຕາການປະລາການຮຽນ

## ເປົ້າໝາຍ ແລະ ຜົນໄດ້ຮັບໄລຍະກາງ

ດ້ານຄວາມຊ່ວຍເຫຼືອແຜນຍຸດທະສາດການສຶກສາສຳລັບປະເທດລາວ 2013-2018 ຂອງລັດຖະບານປະເທດອົດສະຕຣາລີ ສອດຄ່ອງກັບແຜນພັດທະນາຂະແໜງສຶກສາຂອງ ສປປ ລາວ ທີ່ແນ່ໃສ່ບັນລຸເປົ້າໝາຍອັນດຽວກັນ ຄືເພື່ອຮັບປະກັນໃຫ້ເດັກຍິງ ແລະເດັກຊາຍໝົດທຸກຄົນ (ໂດຍສະເພາະແມ່ນເດັກດ້ອຍໂອກາດດ້ານສຶກສາ) ໄດ້ຮັບການສຶກສາຂັ້ນພື້ນຖານທີ່ມີຄຸນນະພາບ, ສາມາດອ່ານອອກຂຽນໄດ້ ການນັບເລກພື້ນຖານ ແລະ ມີທັກສະຊີວິດທີ່ຈຳເປັນ. ໂດຍຄຳນຶງເຖິງເປົ້າໝາຍເຫຼົ່ານີ້, ແຜນງານ BEQUAL ຈຶ່ງໄດ້ຮັບການອອກແບບ ໃຫ້ມີຜົນໄດ້ຮັບຕົ້ນຕໍ ຈຳນວນ 3 ຈຸດ ດັ່ງລຸ່ມນີ້:

- ການມີສ່ວນຮ່ວມ: ເດັກດ້ອຍໂອກາດ ແລະໄວໜຸ່ມ ຈະມີສ່ວນຮ່ວມຢ່າງເປັນປົກກະຕິໃນວຽກງານການສຶກສາຂັ້ນປະຖົມ ແລະເຂົ້າໂຮງຮຽນ ໂດຍຄວາມກຽມພ້ອມທີ່ຈະສຶກສາຮຽນຮູ້.
- ຊັບພະຍາກອນ: ສະພາບແວດລ້ອມຂອງການຮຽນການສອນ ໃນເຂດເປົ້າໝາຍ ມີຄວາມທົ່ວເຖິງໝົດທຸກກຸ່ມຄົນ ແລະມີຊັບພະຍາກອນຢ່າງພຽງພໍ.
- ການຮຽນຢ່າງມີປະສິດທິຜົນ: ການສິດສອນມີປະສິດທິຜົນຫຼາຍຂຶ້ນກວ່າເກົ່າ ໂດຍມີຄູອາຈານທີ່ມີຄຸນນະວຸດ ທີ່ສາມາດກະຕຸກຊຸກຍູ້ໃຫ້ເດັກຍິງ ແລະເດັກຊາຍທີ່ດ້ອຍໂອກາດໄດ້ມີໂອກາດສຶກສາຮ່ຳຮຽນ ໃນຈຳນວນຫຼາຍຂຶ້ນກວ່າເກົ່າ.

ເພື່ອຜັນຂະຫຍາຍແນວຄວາມຄິດຂອງແຜນງານດັ່ງກ່າວນີ້ ໃຫ້ສາມາດຄຸ້ມຄອງໄດ້ໃນຕົວຈິງ ແຜນງານ BEQUAL ຈຶ່ງໄດ້ຮັບການອອກແບບໃຫ້ມີໂຄງຮ່າງ ທີ່ປະກອບມີຜົນໄດ້ຮັບຕົ້ນຕໍ ຈຳນວນ 5 ຂົງເຂດວຽກງານ ຊຶ່ງວ່າ ແຕ່ລະຂົງເຂດນັ້ນ ຈະຢູ່ພາຍໃນໜຶ່ງ ຫຼື ຫຼາຍອົງປະກອບ ຄຽງຄູ່ກັບຄາດໝາຍຜົນອອກຈຳນວນໜຶ່ງ ທີ່ຈະໄດ້ຮັບໃນໄລຍະກາງ ແລະ ໃນໄລຍະທ້າຍໂຄງການ. ຜົນໄດ້ຮັບຕົ້ນຕໍເຫຼົ່ານີ້ ຈະສະໜັບສະໜູນຊຶ່ງກັນແລະກັນ ພາຍໃນ ແຕ່ລະອົງປະກອບໂຄງການ ແລະພົວພັນຊຶ່ງກັນແລະກັນ ແລະ ບໍ່ຄວນຈະໄດ້ຮັບການເອົາໃຈໃສ່ຫຼືເນັ້ນໜັກ ສະເພາະອົງປະກອບໃດໜຶ່ງຂອງໂຄງການເທົ່ານັ້ນ ແລະບໍ່ຄວນຈະຖືວ່າ ອົງປະກອບໃດໜຶ່ງ ມີຄວາມສຳຄັນຫຼາຍກວ່າອົງປະກອບອື່ນໆຂອງໂຄງການ.

## ຜົນໄດ້ຮັບຕົ້ນຕໍ

ຜົນໄດ້ຮັບຕົ້ນຕໍ ແລະອົງປະກອບຂອງໂຄງການ ທີ່ມີຄວາມພົວພັນເຊື່ອງກັນແລະກັນ ມີດັ່ງລຸ່ມນີ້:

1. **ການວາງແຜນ, ການປະສານງານ ແລະ ນະໂຍບາຍດ້ານການສຶກສາ**: ແຜນງານນີ້ແມ່ນໜຶ່ງໃນການລົງທຶນ ເພື່ອຍົກລະດັບຂີດຄວາມສາມາດຂອງລັດຖະບານ ສປປ ລາວ ແນ່ໃສ່ຂົງເຂດວຽກງານການນຳພາ ແລະ ຄຸ້ມຄອງຂະແໜງການສຶກສາຂັ້ນພື້ນຖານ ໂດຍການສ້າງຄວາມເຂັ້ມແຂງໃຫ້ກະຊວງສຶກສາທິການແລະກິລາ ໃນຂົງເຂດວຽກງານຈຳນວນໜຶ່ງ ຊຶ່ງຈະເປັນການປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດໂຄງການໃຫ້ປະສົບຜົນສຳເລັດ ແລະ ບັນລຸຜົນໄດ້ຮັບຕົ້ນຕໍ ທີ່ຄາດໝາຍໄວ້.

   **ອົງປະກອບ 1: ນະໂຍບາຍ, ການວາງແຜນ ແລະການປະສານງານ**

2. **ເພີ່ມລະດັບການມີສ່ວນຮ່ວມ**: ເພື່ອຊ່ວຍເດັກດ້ອຍໂອກາດ ໂດຍສະເພາະແມ່ນເດັກຍິງ ແລະເດັກພິການຢູ່ເຂດຊົນນະບົດ ຊຶ່ງຄອບຄົວຂອງພວກເຂົາ ມີຄວາມ

ທຸກຍາກ ແລະພົບຄວາມທ້າທາຍດ້ານສຸຂະພາບ ແລະດ້ານໂພຊະນາການ ທີ່ຖືວ່າ ເປັນ ສິ່ງກີດຂວາງການມີສ່ວນຮ່ວມຂອງພວກເຂົາ ຕໍ່ກັບກັບການເຂົ້າເຖິງການ ສຶກສາ.

**ອົງປະກອບ 2.1 ການມີສ່ວນຮ່ວມ ແລະການເຂົ້າເຖິງ**

**ອົງປະກອບ 2.2 ການສະໜອງອາຫານ ຢູ່ໂຮງຮຽນ**

3. **ການສະໜັບສະໜູນວຽກງານກໍ່ສ້າງຄູ**: ເພື່ອຕອບສະໜອງຕາມຄວາມຮຽກຮ້ອງຕ້ອງການ ດ້ານການກໍ່ສ້າງຄູກ່ອນປະຈຳການ ແລະ ປະຈຳການແລ້ວ ໃນຂັ້ນປະຖົມ ເພື່ອປັບປຸງຜົນການຮຽນຂອງນັກຮຽນຊັ້ນປະຖົມໃຫ້ດີຂຶ້ນກວ່າເກົ່າ ໂດຍຜ່ານການປັບປຸງການສອນໃຫ້ມີປະສິດທິຜົນ. ແຜນງານນີ້ ຈະເນັ້ນໜັກໃສ່ວຽກງານປັບປຸງສະພາບແວດລ້ອມຂອງໂຮງຮຽນ ບົນພື້ນຖານ ການຄຸ້ມຄອງ, ການກໍ່ສ້າງຄູ ແລະ ຮັບປະກັນໃຫ້ຄູຊົນເຜົ່າ ໂດຍສະເພາະແມ່ນຄູເພດຍິງ ໄດ້ຮັບການຝຶກອົບຮົມ ແລະ ບັນຈຸຕາມຈຳນວນທີ່ເໝາະສົມແລະພຽງພໍຕໍ່ຄວາມຮຽກຮ້ອງຕ້ອງການຢູ່ເຂດຊົນນະບົດ ຫ່າງໄກສອກຫຼີກ ເພື່ອເປັນການຍົກລະດັບມາດຖານການຮຽນ ຢູ່ເຂດເຫຼົ່ານັ້ນ.

**ອົງປະກອບ 3.1 ການກໍ່ສ້າງ**

**ອົງປະກອບ 3.2 ການບຳລຸງຄູປະຈຳການ**

4. **ອຸປະກອນການຮຽນ-ການສອນ:** ເພື່ອສະໜອງອຸປະກອນ ສຳລັບການຝຶກອົບຮົມຄູຊັ້ນປະຖົມ ແລະ ເພື່ອພັດທະນາອຸປະກອນແບບໃໝ່ ສຳລັບໂຮງຮຽນປະຖົມ ເພື່ອໃຊ້ເຂົ້າໃນວຽກງານການຮຽນການສອນພາສາລາວ, ການສອນຫ້ອງຄວບ, ການສົ່ງເສີມໃຫ້ເດັກຮັກການອ່ານ ແລະ ເພື່ອສະໜັບສະໜູນການແຈກຢາຍປຶ້ມແບບຮຽນໃຫ້ໂຮງຮຽນປະຖົມ ໝົດທຸກແຫ່ງ.

**ອົງປະກອບ 4.1 ອຸປະກອນການຮຽນ-ການສອນ**

5. **ໂຄງລ່າງພື້ນຖານຂອງໂຮງຮຽນ**: ເພື່ອສ້ອມແປງຫ້ອງຮຽນທີ່ມີໃນປະຈຸບັນ ແລະ ເພື່ອສະໜອງຫ້ອງນ້ຳ, ບ່ອນລ້າງມື ແລະ ບ່ອນທຳຄວາມສະອາດໃຫ້ຖືກຕາມຫຼັກສຸຂະອະນາໄມ (*WASH*) ຢູ່ພາຍໃນເມືອງເປົ້າໝາຍ ບົນພື້ນຖານບຸລິມະສິດຕົວຈິງ ແລະ ອາດຈະມີກິດຈະກຳກໍ່ສ້າງຫ້ອງຮຽນແລະຫ້ອງນ້ຳ ເພີ່ມຕື່ມຈຳນວນໜຶ່ງ ອີງຕາມຄວາມຈຳເປັນແບບພິເສດ ຄຽງຄູ່ກັບການຍົກລະດັບໂຮງຮຽນມູນລະປະຖົມໃຫ້ເປັນໂຮງຮຽນປະຖົມສົມບູນ.

**ອົງປະກອບ 5.1 ການສ້ອມແປງຫ້ອງຮຽນ, ເພີ້ນີເຈີ ແລະ ໂຮງຮຽນປະຖົມ**

**ອົງປະກອບ 5.2 ການກໍ່ສ້າງສະຖານທີ່ສຳລັບສຸຂະອະນາໄມຂຶ້ນໃໝ່ ໃນໂຮງຮຽນປະຖົມ**

ຈະມີການແກ້ໄຂ ຊ່ອງຫວ່າງຄວາມສະເໝີພາບ ແລະ ການມີສ່ວນຮ່ວມ ໃນທຸກອົງປະກອບທີ່ສຳຄັນ ແລະ ຍຸດທະສາດທັງໝົດ, ລວມທັງການຈັດບູລິມະສິດກັບການຊອກຫາ ແມ່ຍິງຊົນເຜົ່າໃນທ້ອງຖິ່ນເພື່ອໃຫ້ເປັນຄູອາຈານ; ສ້າງຄວາມເຂັ້ມແຂງໃນເນື້ອໃນການຝຶກອົບຮົມຄູອາຈານ ແລະ ການນິເທດເພື່ອໃຫ້ມີສ່ວນຮ່ວມ; ຮັບປະກັນຫລັກສູດສະບັບປັບປຸງ

ແມ່ນບໍ່ໃຫ້ມີອັກຄະຕິການແບ່ງແຍກບົດບາດຍິງຊາຍ ແລະ ຊົນເຜົ່າ; ແລະຮັບປະກັນວ່ານັກຮຽນພິການສາມາດເຂົ້າຮຽນໃນໂຮງຮຽນໃຫມ່.

ອົງປະກອບທັງຫມົດຈະມີການພົວພັນແຕ່ລະຜົນໄດ້ຮັບຕົ້ນຕໍ ແລະ ມີລາຍລະອຽດດັ່ງໄດ້ອະທິບາຍໃນ**ຮູບພາບທີ2**

ທົ່ວທຸກເຂດຜົນໄດ້ຮັບທີ່ສໍາຄັນ, ຍຸດທະສາດເພື່ອແກ້ໄຂຄວາມສະເຫມີພາບແລະຊ່ອງຫວ່າງການສ່ວນລວມ, ລວມທັງການບູລິມະສິດທີ່ຈະຊອກຄູຜູ້ຍິງຊົນເຜົ່າໃນທ້ອງຖິ່ນເພື່ອໃຫ້ເປັນຄູອາຈານ; ສ້າງຄວາມເຂັ້ມແຂງເນື້ອໃນການຝຶກອົບຮົມຄູອາຈານ ແລະ ນິເທດ ລວມ; ການຮັບປະກັນໄດ້ຫລັກສູດສະບັບປັບປຸງແມ່ນບໍ່ມີຄວາມລໍາອຽງບົດບາດຍິງຊາຍແລະອຽງຊົນເຜົ່າ; ແລະຮັບປະກັນວ່າສະຖານທີ່ໂຮງຮຽນໃຫມ່ສາມາດໄດ້ຮັບການເຂົ້າເຖິງໂດຍນັກຮຽນພິການ.

## 4: ແຜນງານຄຸນນະພາບ ແລະ ນເຂົ້າເຖິງການສຶກສາຂັ້ນພື້ນຖານໃນ ສປປລ

**ເປົ້າໝາຍ**

ເດັກຍິງ ແລະ ເດັກຊາຍ, ໂດຍສະເພາະແມ່ນພວກດ້ອຍໂອກາດ, ຈຳນວນຫຼາຍກວ່າເກົ່າສຳເລັດ ການສຶກສາຂັ້ນພື້ນຖານທີ່ມີຄຸນນະພາບດີ, ພ້ອມທັງສາມາດອ່ານອອກຂຽນເປັນ, ຄິດໄລ່ເປັນ ແລະ ມີທັກສະຊີວິດອື່ນໆ

**ຜົນໄດ້ຮັບ ໃນຕອນທ້າຍຂອງແຜນງ...**

**ແຫຼ່ງການຮຽນທີ່ດີກວ່າ**

ແວດລ້ອມການຮຽນໃນໂຮງຮຽນ ໃນເມືອງເປົ້າໝາຍພິອາການ, ນ້ຳໃຊ້ ແລະ ...

**ເພີ່ມການເຂົ້າຮຽນ**

ເດັກຍິງ ແລະ ເດັກຊາຍ, ໂດຍສະເພາະແມ່ນ ພວກດ້ອຍໂອກາດ ...

**ການສິດສອນທີ່ມີປະສິດທິພາບ**

ຄູສອນ ໃນເມືອງເປົ້າໝາຍ ດຳເນີນການສອນທີ່ມີຄຸນນະພາບດີ

**ຜົນໄດ້ຮັບໃນຕອນທ້າຍຂອງໄລຍະ 2...**

**ຂົງເຂດຜົນໄດ້ຮັບຕົ້ນຕໍ 4: ອຸປະກອນການຮຽນການສອນ**

***ຜົນໄດ້ຮັບໃນຕອນທ້າຍຂອງໄລຍະທີ 1 :***

- ທົບທວນ ແລະ ການປັບປຸງຫຼັກສູດແມ່ນກຳລັງໄດ້ຮັບການຈັດຕັ້ງປະຕິບັດ
- ຄູຝຶກ ໃນການກໍ່ສ້າງຄູ ແລະ ການບຳລຸງຄູປະຈຳການນຳໃຊ້ອຸປະກອນໃໝ່ໃນຊັ້ນປະຖົມ.
- ພະນັກງານວິທະຍາໄລສ້າງຄູ ແລະ ຄູປະຖົມສ້າງອຸປະກອນການຮຽນຂອງພວກເຂົາເອງໃນລາຄາຕໍ່າ.
- ວິທະຍາໄລສ້າງຄູ ແລະ ໂຮງຮຽນປະຖົມໃນເມືອງ ເປົ້າໝາຍມີ

**ຂົງເຂດຜົນໄດ້ຮັບຕົ້ນຕໍ 5: ພື້ນຖານໂຄງລ່າງໂຮງຮຽນ**

***ຜົນໄດ້ຮັບໃນຕອນທ້າຍຂອງໄລຍະທີ 1:***

- ການເພີ່ມຫ້ອງຮຽນຊັ້ນປະຖົມທີ່ ເໝາະສົມ ແລະ ເຂົ້າເຖິງໄດ້ນັ້ນ ຈະເພີ່ມການເຂົ້າຮຽນ ຂອງເດັກຊາຍ ແລະ ເດັກຍິງໃນໂຮງຮຽນ ເປົ້າໝາຍ ແລະ ເຮັດໃຫ້ພວກເຂົາຮຽນຕໍ່ຮໍ່າຮຽນ.
- ການເພີ່ມການສະໜອງນ້ຳໃຊ້ ແລະ ສິ່ງອຳນວຍຄວາມສະດວກດ້ານສຸຂະອະນາໄມ

ສົມ ແລະ ເຂົ້າເຖິງໄດ້ນັ້ນເໝາະຈະເພີ່ມການເຂົ້າຮຽນ ຂອງເດັກຊາຍ ແລະ ເດັກຍິງໃນໂຮງຮຽນເປົ້າໝາຍ.

- ພ່ອຍງານກໍ່ສ້າງການສຶກສາ ແລະ ຄຸ້ມຄອງອອກ

**ຂົງເຂດຜົນໄດ້ຮັບຕົ້ນຕໍ 2: ເພີ່ມການເຂົ້າຮຽນ**

***ຜົນໄດ້ຮັບໃນຕອນທ້າຍຂອງໄລຍະທີ 1:***

- ເດັກຊາຍ ແລະ ເດັກຍິງ ຮວມທັງເດັກພິການ ແລະ ເດັກຊົນ ເຜົ່າສ່ວນນ້ອຍຈຳນວນຫຼາຍກວ່າເກົ່າເຂົ້າຮຽນໃນໂຮງຮຽນປະຖົມ ແລະ ມາໂຮງຮຽນເປັນປະຈຳ.
- ຜູ້ປົກຄອງ ແລະ ສະມາຊິກຊຸມຊົນ ມີທັກສະເພີ່ມຂຶ້ນເພື່ອປຸກ ລະດົມ ແລະ ສະໜັບສະໜູນ ການຮໍ່າຮຽນໂດຍສະເພາະແມ່ນ ການອ່ານ.
- ຜູ້ປົກຄອງ, ເດັກ ແລະ ສະມາ ຊິກຊຸມຊົນ ຈຳນວນຫຼາຍກວ່າເກົ່າເຫັນຄຸນຄ່າຂອງການສຶກສາ ສຳລັບທຸກຄົນໂດຍສະເພາະແມ່ນ

**ຂົງເຂດຜົນໄດ້ຮັບຕົ້ນຕໍ 1: ນະໂຍບາຍ, ການວາງແຜນ ແລະ ການປະສານງານ**

***ຜົນໄດ້ຮັບໃນຕອນທ້າຍຂອງໄລຍະທີ 1:***

- ກະຊວງສຶກສາທິການ ແລະ ກິລານຳໃຊ້ຫຼັກການຕ່າງໆ ເພື່ອປະກອບເຂົ້າໃນການວາງນະໂຍບາຍ ແລະ ຕັດສິນກ່ຽວກັບງົບປະມານ.
- ພະແນກສຶກສາທິການ ແລະ ກິລາແຂວງ ແລະ ຫ້ອງການສຶກສາທິການ ແລະ ກິລາເມືອງ, ບັນດາອຳນວຍການໂຮງຮຽນ ແລະ ຄະນະກຳມະການພັດທະນາການສຶກສາຂັ້ນບ້ານມີປະສິດທິພາບຫຼາຍກວ່າເກົ່າ ໃນການຈັດຕັ້ງປະຕິບັດ, ຕິດຕາມ ແລະ ສະໜັບສະໜູນ ນະໂຍບາຍການສຶກສາ ແລະ ໃນການຈັດສັນແຫຼ່ງຊັບພະຍາກອນ ເພື່ອຕອບສະໜອງກັບຄວາມຕ້ອງການໃນໂຮງຮຽນ.
- ໂຮງຮຽນຈຳນວນຫຼາຍກວ່າເກົ່າໃນເມືອງ ເປົ້າໝາຍ ສາມາດປະຕິບັດ ຕາມມາດຕະ ຖານຄຸນນະພາບການສຶກສາແຫ່ງຊາດ.

**ຂົງເຂດຜົນໄດ້ຮັບຕົ້ນຕໍ 3: ການສະໜັບສະໜູນວຽກງານການກໍ່ສ້າງຄູ**

***ຜົນໄດ້ຮັບໃນຕອນທ້າຍຂອງໄລຍະທີ 1:***

- ປັບປຸງຫຼັກສູດການສຶກສາຊັ້ນປະຖົມກ່ອນປະຈຳການ ແລະ ຊັ້ນກາງມ) (ປະຖົມ, ວິທີການສິດສອນໃໝ່ ທີ່ອີງຕາມລະດັບຄວາມສາ ມາດ, ຂະຫຍາຍການລົງຝຶກຫັດໃນໂຮງຮຽນ, ປັບປຸງການປະສານງານ ແລະ ການຈັດຕັ້ງປະຕິບັດວຽກງານ ຂອງ ກົມສ້າງຄູ, ກົມອານຸບານ ແລະ ປະຖົມສຶກສາ ແລະ ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ ຂອງກະ ຊວງ ສຶກສາທິການ ແລະ ກິລາ ແລະ ວິທະຍາໄລສ້າງຄູ .ແຫ່ງ ຂ
- ຂະຫຍາຍ ກຸ່ມວິຊາການ ແລະ ຄູຝຶກຂອງກະຊວງສຶກສາທິການ ແລະ ກິລາ ທີ່ມີທັກສະໃນທາງດ້ານຍຸດທະສາດສະໄໝໃໝ່ ສຳລັບ ການຝຶກອົບຮົມຄູ ແລະ ຜູ້ນຳພາໂຮງຮຽນ.
- ມີຄູຊົນເຜົ່າຫຼາຍຂຶ້ນກວ່າເກົ່າ ໂດຍ) ເພື່ອສອນໃນບ້ານ (ສະເພາະແມ່ນ ແມ່ຍິງ .ຫ່າງໄກສອກ ຫຼີກ

**ວຽກງານສົ່ງເສີມແຜນງານ**

ການຄຸ້ມຄອງແຜນງານ ໄດ້ຮັບການສະໜັບສະໜູນຈາກການຕິດຕາມ, ການປະເມີນຜົນ, ການຄົ້ນຄວ້າ ແລະ ການຮໍ່າຮຽນທີ່ມີຄຸນນະພາບສູງ ແລະ ສັງລວມເອົາປະເດັນກ່ຽວກັບ ຄວາມສະເໝີພາບ ລະຫວ່າງ ບົດບາດຍິງຊາຍ ແລະ ເຜີຍແຜ່ຄວາມ.ຊາຍ-

## *ການຈັດຕັ້ງປະຕິບັດແຜນງານ BEQUAL*

ລັດຖະບານປະເທດອົດສະຕຣາລີ (ໂດຍຜ່ານກະຊວງການຕ່າງປະເທດ ແລະ ການຄ້າຂອງອົດສະຕາລີ) ຈະຮ່ວມຈັດຕັ້ງປະຕິບັດໂຄງການ BEQUAL ກັບລັດຖະບານແຫ່ງ ສປປ ລາວ (ຊຶ່ງຕາງໜ້າໂດຍກະຊວງສຶກສາທິການ ແລະ ກິລາ ໃນຂັ້ນສູນກາງ, ຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນໂຮງຮຽນ). ແຜນງານ BEQUAL ຈະໄດ້ຮັບການປະຕິບັດໂດຍຜ່ານວິທີການຂອງໂຄງການ, ບ່ອນທີ່ຊັບພະຍາກອນແມ່ນສະຫນອງໃຫ້ເພື່ອສະຫນັບສະຫນູນພະແນກການທີ່ສໍາຄັນຂອງກະຊວງໃນການປະຕິບັດບູລິມະສິດຂອງການສຶກສາແຜນພັດທະນາຂະແຫນງການ, ທີ່ກ່ຽວຂ້ອງກັບການສຶກສາຂັ້ນພື້ນຖານ.

ໃນສະຫນັບສະຫນູນຂອງບູລິມະສິດເຫຼົ່ານີ້, BEQUAL ຈະນໍາເອົາບົດຮຽນ ແລະ ປະສົບການຂອງບັນດາຄູ່ຮ່ວມງານຫຼາຍຝ່າຍ ເພື່ອຈັດຕັ້ງປະຕິບັດແຜນງານ, ລວມທັງ ອົງການຈັດຕັ້ງສາກົນທີ່ບໍ່ແມ່ນລັດຖະບານ (UNICEF ແລະ WFP) ອົງການທີ່ບໍ່ຫວັງຜົນກໍາໄລ ແລະ ສະມາຄົມທີ່ບໍ່ຫວັງຜົນກໍາໄລ ແລະ ການຊ່ວຍເຫຼືອທາງດ້ານວິຊາການ ແລະ ການສະໜັບສະໜູນແຜນງານອື່ນໆ ທີ່ເຮັດວຽກໂດຍ ຫົວໜ້າທີມງານທີ່ປຶກສາປະຈໍາແຜນງານ.

ຈະມີຂອບເຂດແຜນງານຮ່ວມກັນ ແລະ ໂຄງຮ່າງການບໍລິຫານທີ່ຈະຮັບປະກັນມີການຮ່ວມມືທີ່ມີປະສິດທິຜົນແລະການປະສານງານລະຫວ່າງພາກສ່ວນກ່ຽວຂ້ອງແຜນງານທັງຫມົດ.

ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ ແລະ ສະມາຄົມທີ່ບໍ່ຫວັງຜົນກໍາໄລ ຈະມີສ່ວນຮ່ວມໃນການແກ້ໄຂການເຂົ້າຮຽນໃນຊັ້ນປະຖົມສຶກສາ ແລະ ບັນດາກິດຈະກໍາທີ່ຈັດຕັ້ງປະຕິບັດໃນຂັ້ນຊຸມຊົນ. ຫົວໜ້າທີມງານທີ່ປຶກສາປະຈໍາໂຄງການ BEQUAL ແລະຄູ່ຮ່ວມພັດທະນາອື່ນໆ (ເຊັ່ນ ອົງການອາຫານໂລກ ແລະອົງການອຸຍນິເຊັບ) ຈະເປັນຜູ້ຮັບຜິດຊອບໃນການຄຸ້ມຄອງ ແລະຈັດຕັ້ງປະຕິບັດອົງປະກອບແລະກິດຈະກໍາຈໍານວນໜຶ່ງ ທີ່ແຍກອອກຕ່າງຫາກ ຊຶ່ງຢູ່ພາຍໃຕ້ຄວາມຮັບຜິດຊອບ ຂອງພວກເຂົາ. ອົງການອາຫານໂລກ, ໂດຍການສືບຕໍ່ວຽກງານຂອງພວກເຂົາໃນປະຈຸບັນ, ຈະຈັດຕັ້ງປະຕິບັດໂຄງການສະໜອງອາຫານໃຫ້ນັກຮຽນ (ອົງປະກອບ 2.2) ຊຶ່ງໄດ້ຮັບການອອກແບບໃຫ້ປະກອບສ່ວນເຂົ້າໃນການສົ່ງເສີມການມີສ່ວນຮ່ວມ. ອົງການອຸຍນິເຊັບ ຈະນໍາພາການລົງທຶນໃສ່ນໍ້າສະອາດ, ສຸຂະພິບານ ແລະສຸຂະອະນາໄມ (ອົງປະກອບ 5.2: ສຸຂະພິບານ) ຢູ່ຕາມໂຮງຮຽນປະຖົມ ຊຶ່ງເປັນການສືບຕໍ່ວຽກງານໃນປະຈຸບັນຂອງພວກເຂົາ.

## ພາບທີ 3 ຂົງເຂດຜົນໄດ້ຮັບຕົ້ນຕໍ, ອົງປະກອບ ແລະ ຄວາມຮັບຜິດຊອບ ຈັດຕັ້ງປະຕິບັດ






## ການຄຸ້ມຄອງ ແລະ ການປົກຄອງ

ການຄຸ້ມຄອງ ແລະການປົກຄອງໂຄງການ BEQUAL ຈະມີຢູ່ສອງລະດັບຄື: ລະດັບຍຸດທະສາດ ໂດຍຜ່ານຄະນະຊີ້ນຳໂຄງການ BEQUAL ແລະລະດັບດຳເນີນງານ ໂດຍຜ່ານໜ່ວຍງານດ້ານວິຊາການຂອງໂຄງການ (ເບິ່ງພາບທີ 4).

ໃນເບື້ອງຕົ້ນ, ຫົວໜ້າກົມແຜນການ ຈະເປັນປະທານໜ່ວຍງານດ້ານວິຊາການໂຄງການ ແລະປ່ຽນຜຽນກັນກັບຫົວໜ້າກົມອື່ນໆ ໃນໄລຍະຕໍ່ມາ.

ຄູ່ຮ່ວມມື ຈາກແຕ່ລະພາກສ່ວນຈະດຳເນີນວຽກງານຢ່າງໃກ້ຊິດກັບຫົວໜ້າກົມແຜນການ ກະຊວງສຶກສາທິການແລະກິລາ ຄຽງຄູ່ກັບຄູ່ຮ່ວມມືອື່ນໆ ເພື່ອຮັບປະກັນໃຫ້ການຈັດຕັ້ງປະຕິບັດໂຄງການ ດຳເນີນໄປຢ່າງຄ່ອງຕົວ. ຄູ່ຮ່ວມມືຂັ້ນສູນກາງ ປະກອບມີພາກສ່ວນດັ່ງຕໍ່ໄປນີ້: ກົມແຜນການ, ກົມສ້າງຄູ, ກົມອະນຸບານແລະປະຖົມສຶກສາ, ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ, ສູນປະກັນຄຸນນະພາບການສຶກສາ, ກົມການເງິນ ແລະກົມກວດກາ. ໃນຂັ້ນແຂວງ

ແລະເມືອງ, ແຜນງານຈະຮ່ວມມືກັບ ພະແນກສຶກສາທິການແລະກິລາແຂວງ ຂອງແຂວງເປົ້າໝາຍ, ພະແນກສຶກສາທິການແລະກິລາເມືອງ ຂອງເມືອງເປົ້າໝາຍ ແລະໂຮງຮຽນສ້າງຄູ ຈຳນວນທັງໝົດ 8 ແຫ່ງ ໂດຍປະສານສົມທົບກັບ ທ່ານເຈົ້າເມືອງ ແລະເຈົ້າແຂວງ ທີ່ກ່ຽວຂ້ອງ.

ນອກຈາກໜ່ວຍງານຂະແໜງສຶກສາຈະມີພາລະບົດບາດເປັນໜ່ວຍງານດ້ານວິຊາການແຜນງານ BEQUAL ແລ້ວ, ໜ່ວຍງານຂະແໜງສຶກສາ ຍັງມີພາລະບົດບາດໃນການຮັບປະກັນໃຫ້ນະໂຍບາຍຕ່າງໆ, ລະບົບການວາງແຜນ ແລະປະສານງານ ມີຄວາມສອດຄ່ອງກັບກິດຈະກຳຂອງແຜນງານ BEQUAL. ເຖິງຢ່າງໃດກໍ່ດີ, ພາຍໃຕ້ການນຳພາ ຂອງ DFAT ຂອງແຜນງານ BEQUAL ຍັງຈະສືບຕໍ່ສະໜອງຊັບພະຍາກອນ ເຂົ້າໃນການຈັດຕັ້ງປະຕິບັດວຽກງານ ໃນນາມທີ່ເປັນກອງເລຂາທິການ ຂອງໜ່ວຍງານຂະແໜງສຶກສາ ແລະ ສືບຕໍ່ໃຫ້ຄວາມຊ່ວຍເຫຼືອ ວຽກງານສ້າງຄວາມເຂັ້ມແຂງໃຫ້ ໂຄງຮ່າງການຈັດຕັ້ງຂອງໜ່ວຍງານຂະແໜງຍ່ອຍຕ່າງໆ ທີ່ກ່ຽວຂ້ອງ.

ຮູບທີ 4: ການຄຸ້ມຄອງ ແລະ ການຈັດການຄຸ້ມຄອງຂອງ BEQUAL
ຄອງ



## *ການຕິດຕາມ ແລະປະເມີນຜົນ*

ຮູບແບບວິທີການຕິດຕາມ ແລະ ປະເມີນຜົນແຜນງານ BEQUAL ຈະໄດ້ຮັບການຈັດຕັ້ງປະຕິບັດໃນຫຼາຍລະດັບ ທີ່ແຕກຕ່າງກັນ. ແຜນງານດ້ານຄວາມຊ່ວຍເຫຼືອເພື່ອການພັດທະນາຂອງລັດຖະບານປະເທດອົດສະຕຣາລີ ໄດ້ສ້າງ**ລະບົບກົນໄກເພື່ອການຮຽນຮູ້** ພາຍໃນຂະແໜງພັດທະນາຊົນນະບົດ ຮຽບຮ້ອຍແລ້ວ ແລະໄດ້ສະເໜີໃຫ້ຜັນຂະຫຍາຍກົນໄກດັ່ງກ່າວນີ້ ເຂົ້າໃນຂະແໜງການສຶກສາຂັ້ນພື້ນຖານ.

ເນື້ອໃນຕົ້ນຕໍໃນປະຈຸບັນຂອງກົນໄກດັ່ງກ່າວນີ້ ແມ່ນການສັງລວມ, ຄຸ້ມຄອງ ແລະເຜີຍແຜ່ບົດຮຽນທີ່ຖອດຖອນໄດ້ ແລະຜົນສຳເລັດ ອີງຕາມພາລະບົດບາດ ທີ່ຕິດພັນກັບວຽກງານຕິດຕາມ, ປະເມີນຜົນ ແລະການຄຸ້ມຄອງຊັບພະຍາກອນ ພາຍໃນຂະແໜງການພັດທະນາຊົນນະບົດ, ຖ້າໄດ້ຮັບການຜັນຂະຫຍາຍເຂົ້າໃນຂົງເຂດວຽກງານການສຶກສາຂັ້ນພື້ນຖານ, ກົນໄກດັ່ງກ່າວນີ້ ຈະສະໜອງໜ້າທີ່ຄ້າຍຄືກັນ ສຳລັບແຜນງານ BEQUAL. ສະນັ້ນ ວຽກງານຕິດຕາມ ແລະປະເມີນຜົນຂອງແຜນງານ BEQUAL ໃນ**ລະດັບແຜນງານລວມ** ຈະໄດ້ຮັບການຊີ້ນຳພາຍໃຕ້ກົນໄກດັ່ງກ່າວນີ້ ຊຶ່ງຈະເປັນພື້ນຖານໃນການຕິດຕາມ ແລະ ປະເມີນຜົນ ການລົງທຶນໂດຍລວມ ເພື່ອພັດທະນາການສຶກສາ.

**ໃນລະດັບອົງປະກອບໂຄງການ**, ວຽກງານຕິດຕາມແລະປະເມີນຜົນ ຈະໄດ້ຮັບການຈັດຕັ້ງປະຕິບັດ ໂດຍແຕ່ລະພາກສ່ວນທີ່ຈັດຕັ້ງປະຕິບັດກິດຈະກຳໂຄງການ (ເຊັ່ນ: ອົງການອາຫານໂລກ, ອົງການອຸຍນິເຊັບ ແລະຫົວໜ້າທີມງານທີ່ປຶກສາ ໂດຍສົມທົບກົມກອດກາ) ແລະພາຍໃນ**ແຕ່ລະໝວດກິດຈະກຳ** ເຊັ່ນ ກິດຈະກຳຈຳນວນໜຶ່ງ ທີ່ຈະໄດ້ຮັບການຈັດຕັ້ງປະຕິບັດໂດຍອົງການຈັດຕັ້ງທີ່ບໍ່ສັງກັດລັດຖະບານ ແລະອົງການຈັດຕັ້ງທີ່ບໍ່ຫວັງຜົນກຳໄລ ແລະໂດຍຫົວໜ້າທີມງານທີ່ປຶກສາຂອງແຜນງານ BEQUAL.

ຂໍ້ມູນອື່ນໆກະລຸຊອກຫາຂໍ້ມູນຢູ່ລຸ່ມນີ້

ກະລຸນາເບິ່ງເອກະສານແຜນງານປັບປຸງຄຸນນະພາບ ແລະ ຂະຫຍາຍ ໂອກາດເຂົ້າຮຽນ

ສຳລັບການສຶກສາຂັ້ນພື້ນຖານ ຢູ່ ສ ປປ ລາວ (BEQUAL)
http://aid.dfat.gov.au/countries/eastasia/laos/Documents/bequal-investment-design-doc.pdf

ເບິ່ງການໃຫ້ທຶນຂອງລັດທະບານອົດສະຕາລີຕໍ່ ປະເທດລາວທີ່:
http://aid.dfat.gov.au/countries/eastasia/laos/Pages/home


ກົມແຜນການ
ຫົວໜ້າທີມ
(ເຮັດວຽກເຕັມເວລາ)
ກົມອະນຸບານ ແລະປະຖົມສຶກສາ
ຜູ້ຊ່ຽວຊານດ້ານ ການສຶກສາ, ການເຂົ້າຮຽນ ແລະ ການເຂົ້າຮ່ວມຂອງຊຸມຊົນ
(ເຮັດວຽກເຕັມເວລາ)
ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ
ຜູ້ຊ່ຽວຊານດ້ານ ອຸປະກອນການຮຽນ-ການສອນ
(ເຮັດວຽກເຕັມເວລາ)
ກົມສ້າງຄູ
ຜູ້ຊ່ຽວຊານດ້ານການສຶກສາຄູ
(ເຮັດວຽກເຕັມເວລາ)
ວິທະຍາໄລສ້າງຄູ
ອາສາສະໝັກສອນພາສາອັງກິດ
(ເຮັດວຽກເຕັມເວລາ)
ໂດຍການຄຸ້ມຄອງຜ່ານທາງແຜນງານ AVID
ພະແນກສຶກສາທິການ ແລະກິລາແຂວງ
ຫ້ອງການສຶກສາທິການແລະກິລາເມືອງ
ຜູ້ຊ່ຽວຊານຂັ້ນແຂວງ
(ເຮັດວຽກເຕັມເວລາ)
ພະນັກງານວິຊາການ ຂອງແຜນງານ BEQUAL
(ເຮັດວຽກເຕັມເວລາ)
ຜູ້ຊ່ຽວຊານດ້ານໂຄງລ່າງພື້ນຖານ
(12 ເດືອນເຮັດວຽກເຕັມເວລາ, ຫຼັງຈາກນັ້ນ ເຮັດວຽກບາງເວລາ)
ໜ່ວຍງານຄຸ້ມຄອງ ການກໍ່ສ້າງ ແລະ ການອອກແບບ ໂຄງລ່າງພື້ນຖານ ຂອງການສຶກສາ (ກົມການເງິນ)
ຜູ້ຈັດການຝ່າຍໂຄງລ່າງພື້ນຖານ (ເຮັດວຽກເຕັມເວລາ)
ວິສະວະກອນປະຈຳແຂວງ ແລະ ເມືອງ (ເຮັດວຽກເຕັມເວລາ)
ຜູ້ຊ່ຽວຊານຝ່າຍການເງິນ
(12 ເດືອນ ເຮັດວຽກເຕັມເວລາ, ຫຼັງຈາກນັ້ນ ເຮັດວຽກບາງເວລາ)
ກົມການເງິນ
ຜູ້ຊ່ຽວຊານການຕິດຕາມແລະປະເມີນຜົນ
(12 ເດືອນ ເຮັດວຽກເຕັມເວລາ, ຫຼັງຈາກນັ້ນ ເຮັດວຽກບາງເວລາ)
ກົມກວດກາ
ພະນັກງານຕິດຕາມ ແລະປະເມີນຜົນ (ເຮັດວຽກເຕັມເວລາ)
ພະນັກງານ ປະສານງານ ແລະ ພະນັກງານບໍລິຫານ ຂອງແຜນງານ BEQUAL
(ເຮັດວຽກເຕັມເວລາ)